ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 19 ຫາ 23 ມິຖຸນາ 2023




ຫ້ອງການກະຊວງກະສິກຳ ແລະ ປ່າໄມ້

# ການລ້ຽງ ແລະ ຂະຫຍາຍພັນປາປາກ



ປາປາກເປັນປາທີ່ລີບຊ້ອນຢູ່ຕາມໜ້ານ້ຳ, ລຳຄອງໜອງບຶງ, ທີ່ມີກະແສນ້ຳໄຫຼຄ່ອຍໆ ຫຼື ນ້ຳນິ້ງ ເປັນປາທີ່ທົນທານ ຕໍ່ການປ່ຽນແປງຂອງສະພາບແວດລ້ອມໄດ້ດີ 1000 ອຸນຫະພູມທີ່ເໝາະສົມໃນການຈະເລີນເຕີບໂຕໜອງປາປາກແມ່ນ 25 - 32 ອົງສາ, ການກິນອາຫານຂອງປາປາກແມ່ນຂຶ້ນກັບຂະໜາດຂອງໂຕປາຄື: ໃນເວລາປາແຕກອອກມາໃໝ່ 3 - 7 ມື້ ມັນຈະກິນຈຳພວກໄຮນ້ຳສັດ ແລະ ໄຮນ້ຳພືດທີ່ນ້ອຍກ່ວາ ປາກຂອງມັນ ສ່ວນທີ່ມີຂະໜາດ 3 - 5 ຊັງຕີແມັດ ແໜ, ຈອກ, ແລະ ຈຳພວກຜັກຕ່າງໆ ສຳລັບປາທີ່ມີຂະໜາດໃຫ່ຍ ມັນຈະກິນຈຳນວນພວກພືດນ້ຳເຊັ່ນ: ໃບມັນຕົ້ນ, ມັນດ້າງ, ຫຍ້າຂົນ, ຫຍ້າປ້ອງ ແລະ ອື່ນໆ. ປາປາກມັກຊອກກິນອາຫານໃນກາງເວັນຫຼາຍກ່ວາກາງຄືນ.

ການລ້ຽງທ່ອມປາປາກ ເພື່ອເປັນພໍ່ແມ່ພັນທີ່ດີມີຄຸນນະພາບຄວນລ້ຽງເອງ ໜອງທີ່ລ້ຽງພໍ່ແມ່ພັນຄວນເປັນໜອງດິນ ຂະໜາດ 400 - 600 ຕາແມັດ ຫຼື ປະມານ 1 ໄລ່ ໂດຍແຍກລ້ຽງລະຫວ່າງປາຜູ້ ແລະ ປາແມ່ ອາຫານທີ່ໃຫ້ກິນໂປຣຕີນປະມານ 30% ໃນອັດຕາ 20 % ພ້ອມທັງໃຫ້ອາຫານເສີມເຊັ່ນ: ປວກ, ຂີ້ກະເດືອນ ແລະ ຫຍ້າຕ່າງໆທີ່ມີໃນທ້ອງຖິ່ນ.

ໃຫ້ສັງເກດເບິ່ງປາບໍ່ໃຫ້ຕຸ້ຍເກີນໄປ ແລະ ລະບົບນ້ຳໄຫຼ ເຂົ້າ-ອອກ ສະດວກຕະຫຼອດເວລາ ເພື່ອເຮັດໃຫ້ໄຂ່ ແລະ ນ້ຳເຊື້ອມີການຈະເລີນເຕີມໂຕພ້ອມປະສົມພັນຕາມລະດູການໃຫ້ໄຂ່ແມ່ນກາງເດືອນພຶດສະພາ (ປາປາກສາມາດປະສົມພັນໄດ້ເດືອນມີນາ ຫາ ເດືອນກັນຍາ).

- ການຈຳແນກເພດ

ປາໂຕຜູ້: ຈະມີຮູບຮ່າງນ້ອຍກ່ວາປາແມ່ ທ້ອງຈະແບນ ທ້ອງແຂງ ຖ້າເຮົາເອົາມືລອງຮີດເບົາໆ ທີ່ທ້ອງຈະມີນ້ຳສີຂາວຂຸ້ນຄ້າຍຄືກັບນ້ຳນົມໄຫຼອອກມາ ຫາກເອົາມືລູບຕາມແກ້ມຈະຮູ້ສຶກຊາມື

ໂຕແມ່ທີ່ສົມບູນ ແມ່ນຄ້າຍຄືກັນແຕ່ເຮົາສັງເກດເຫັນໄດ້ງ່າຍເມື່ອເຖິງລະດູປະສົມພັນ ເຮົາຈະເຫັນທ້ອງຂອງໂຕແມ່ເບັ່ງແບນອອກເມື່ອເວລາເຮົາຈັບໂຕແມ່ຈະນິ້ມ ແລະ ມື່ນ, ສ່ວນໂຕຜູ້ເຮົາລູບຕາມແກ້ມ ແລະ ຄືຈະຮູ້ສຶກຊາກ່ວາໂຕແມ່ ເຮົາຍັງສາມາດຮີດທ້ອງເບົາໆຈະເຫັນນ້ຳເຊື້ອສີຂາວໄຫຼອອກມາ.

- ວິທີການປະສົມພັນມີ 3 ຮູບແບບຄື:

1. ປະສົມພັນແບບທຳມະຊາດ

ວິທີນີ້ເປັນວິທີທຳອິດ ເຊິ່ງເອົາປາໂຕຜູ້ ແລະ ປາໂຕແມ່ປະສົມພັນກັນເອງຕາມທຳມະຊາດ ເມື່ອມັນປະສົມພັນກັນແລ້ວໃຫ້ຍ້າຍປາພໍ່ແມ່ພັນອອກຈາກໜອງ ແລ້ວເຮົາອະນຸບານປານ້ອຍເອງ.

2. ປະສົມພັນແບບເຄິ່ງທຽມ

ວິທີນີ້ປາໂຕຜູ້ ແລະ ປາແມ່ ທີ່ລ້ຽງໃນໜອງ ຫຼື ອ່າງ ເຮົາສາມາດຄວບຄຸມສະພາບແວດລ້ອມເພື່ອໃຫ້ປາປະສົມພັນກັນໄດ້ດ້ວຍການກະຕຸ້ນສັກຢາຮໍໂມນ (ຢາກະຕຸ້ນເພດ) ແລ້ວປ່ອຍໃສ່ອ່າງໃຫ້ປະສົມພັນກັນເອງໂດຍອັນຕາການປ່ອຍປາແມ່ 1 ໂຕ ຕໍ່ ປາໂຕຜູ້ 2 ໂຕ.

3. ປະສົມພັນແບບທຽມ

ຄັດເລືອກພໍ່ແມ່ພັນທີ່ມີຄວາມສົມບູນ, ແຂງແຮງ, ບໍ່ມີບາດແຜຕາມຮ່າງກາຍ, ອາຍຸ 1 ປີ ຂຶ້ນໄປ. ຈາກນັ້ນນຳເອົາພໍ່ແມ່ພັນມາພັກໄວ້ອ່າງປະສົມພັນປະມານ 4-6 ຊົ່ວໂມງ ຈຶ່ງສັກຢາຮໍໂມນ (ຢາກະຕຸ້ນເພດ) ເພື່ອກະຕຸ້ນໃຫ້ໄຂ່ ແລະ ນ້ຳເຊື້ອສົມບູນ.



- ປະລິມານການສັກຢາ: ປາແມ່ 1 ກິໂລກຼາມ ຕໍ່ 1 ຊີຊີ, ປາຜູ້ 1 ກິໂລກຼາມ ຕໍ່ 0,5 ຊີຊີ

- ຂັ້ນຕອນການຮີດໄຂ່ປະສົມນ້ຳເຊື້ອ: ເມື່ອສັກຢາໄດ້ 6-8 ຊົ່ວໂມງ ໃຫ້ນຳເອົາປາໂຕແມ່ທີ່ສັກຢາແລ້ວຂຶ້ນມາເຊັດໃຫ້ແຫ້ງແລ້ວຮີດໄຂ່ເບົາໆເມື່ອເຮົາຮີດໄຂ່ໄດ້ແລ້ວ ນຳເອົາປາໂຕຜູ້ມາເຊັດໃຫ້ແຫ້ງແລ້ວຮີດເອົານ້ຳເຊື້ອເບົາໆປະສົມກັບໄຂ່ ນຳໃຊ້ຂົນໄກ່ມາຄົນໃຫ້ນ້ຳເຊື້ອເພື່ອເຮັດໃຫ້ນ້ຳເຊື້ອໂຕຜູ້ປະສົມກັບໄຂ່ ແລ້ວເອົາໄປຟັກໃສ່ອ່າງ ຫຼື ກະຊັງທີ່ກຽມໄວ້. ໄຂ່ປາປາກຈະຟັກອອກມາເປັນໂຕນ້ອຍພາຍໃນ 8-12 ຊົ່ວໂມງ ຂຶ້ນກັບອຸນຫະພູມນ້ຳ ແລະ ອາກາດຂອງ



ແຕ່ລະທ້ອງຖິ່ນ ຖ້າອຸນຫະພູມສູງກໍ່ເຮັດໃຫ້ໄຂ່ຟັກແຕກອອກມາເປັນໂຕໄວຂຶ້ນ.

- ການອະນຸບານ

- ປາທີ່ແຕກອອກມາໃໝ່ໆມັນຍັງມີຖົງອາ ຫານຕິດຢູ່ທ້ອງຂອງມັນບໍ່ຄວນໃຫ້ອາຫານ

- ປານ້ອຍໄດ້ 3-5 ມື້ ເລີ່ມໃຫ້ອາຫານຈຳພວກໄຂ່ຕົ້ມໃຫ້ເອົາໄຂ່ແດງ ຫຼື ໄຮ່ນ້ຳໃຫ້ມື້ລະ 3 ຄາບ ຫຼັງຈາກນັ້ນກໍເອົາລົງອະນຸບານໃສ່ໜອງໄດ້ເລີຍ, ຫຼັງຈາກປ່ອຍລົງໜອງແລ້ວຄວນໃຫ້ອາຫານທີ່ມີໂປຣຕີນສູງໃຫ້ສອງຄັ້ງຕໍ່ມື້ ເຊົ້າ-ແລງ ອະນຸບານຈົນໄດ້ 45 ມື້ ແລ້ວແຍກຂະໜາດລູກປາຈະລ້ຽງເປັນປາຊີ້ນ ຫຼື ບໍ່ດັ່ງນັ້ນກໍ່ສາມາດຈຳໜ່າຍລູກປາໄດ້ເລີຍ.



ໂດຍ: ສູນພັດທະນາການປະມົງ ( ສພປ ), ສອບຖາມເພີ່ມເຕີມໂທ: 020 2246 5634, 020 5806 9889




ສະໜັບສະໜູນໂດຍ
ປຸ໋ຍໂຟທຣີ ຫຼຸດຕົ້ນທຶນ ເພີ່ມຜົນຜະລິດເປັນມິດກັບສິ່ງແວດລ້ອມ ຕ້ອງປຸ໋ຍໂຟທຣີ
ຕິດຕໍ່ໄດ້ທີ່ຕົວແທນຈຳໜ່າຍທົ່ວປະເທດ ຂອງບໍລິສັດເອໂຟເອສລາວ ຈຳກັດຜູ້ດຽວ, ສຳນັກງານຕັ້ງຢູ່
ບ້ານ ດົງປ່າແຫຼບ ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ ໂທ:020 5961 6564; 020 5592 7332




ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສີງຄາມ
ທ່ານ ສີສະຫວາດ ທອນດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສີມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳພອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;